**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສຳນັກງານນາຍົກລັດຖະມົນຕີ

ເລກທີ 280 / ນຍ

*ນະຄອນຫຼວງວຽງຈັນ, ວັນທີ 08 ກັນຍາ 2005*

# ດຳລັດ

## ວ່າດ້ວຍການປ່ຽນຊື່ ວິທະຍາຄານພະລາທິການ ກອງທັບປະຊາຊົນລາວ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ກົດໝາຍ ວ່າດ້ວຍນາຍທະຫານ ກອງທັບປະຊາຊົນລາວ ສະບັບເລກທີ 07/ສພຊ, ລົງວັນ ທີ 22 ຕຸລາ 2004;
- ອີງຕາມ ໃບສະເໜີ ຂອງ ລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນປະເທດ ສະບັບເລກທີ 1426/ກປທ, ລົງວັນທີ 17 ສິງຫາ 2005.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1.** ປ່ຽນຊື່ ວິທະຍາຄານພະລາທິການ ກອງທັບປະຊາຊົນລາວ ທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມ ດຳລັດ ສະບັບເລກທີ 163/ນຍ, ລົງວັນທີ 29 ສິງຫາ 1996 ມາເປັນ ວິທະຍາຄານບັນຊາ-ເສນາ ກອງທັບປະຊາຊົນລາວ.

**ມາດຕາ 2.** ວິທະຍາຄານບັນຊາ-ເສນາ ກອງທັບປະຊາຊົນລາວ, ສັງກັດຢູ່ໃນໂຄງປະກອບກົງຈັກ ແລະ ຢູ່ໃຕ້ການຊີ້ນຳ ຂອງ ກະຊວງປ້ອງກັນປະເທດ; ເປັນສະຖາບັນການຮຽນ, ການສອນ ແລະ ຄົ້ນຄວ້າວິທະຍາສາດ; ດຳເນີນການກໍ່ສ້າງ ແລະ ບຳລຸງຍົກລະດັບນາຍທະຫານ ດ້ານວຽກງານບັນຊາ, ເສນາ ແລະ ພະລາທິການເຕັກນິກ ຂອງ ກອງທັບປະຊາຊົນລາວ.

**ມາດຕາ 3.** ມອບໃຫ້ ກະຊວງປ້ອງກັນປະເທດ ສົມທົບກັບ ກະຊວງສຶກສາທິການ ເພື່ອກຳນົດຢ່າງຈະແຈ້ງ ກ່ຽວກັບລະດັບຊັ້ນການສຶກສາ ພາຍຫຼັງນັກສຶກສາ ນາຍທະຫານທີ່ຮຽນຈົບຈາກ ວິທະຍາຄານດັ່ງກ່າວນີ້ ຕາມຄວາມເໝາະສົມ.

**ມາດຕາ 4.** ມອບໃຫ້ ກະຊວງປ້ອງກັນປະເທດ ອອກຂໍ້ຕົກລົງ ເພື່ອກຳນົດລະອຽດ, ຈະແຈ້ງ ກ່ຽວກັບ ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບກົງຈັກການຈັດຕັ້ງ ຂອງ ວິທະຍາຄານດັ່ງກ່າວນີ້, ບົນພື້ນ ຖານໃຫ້ກະທັດຮັດ, ສົມເຫດສົມຜົນ ແລະ ຮັບປະກັນການເຄື່ອນໄຫວມີປະສິດທິ ຜົນ.

**ມາດຕາ 5.** ກະຊວງປ້ອງກັນປະເທດ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງ ທ້ອງຖິ່ນ ແລະ ວິທະຍາຄານພະລາທິການ ກອງທັບປະຊາຊົນລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງ ປະຕິບັດ ດຳລັດສະບັບນີ້ ໃຫ້ປະກົດຜົນເປັນຈິງ.

**ມາດຕາ 6.** ດຳລັດສະບັບນີ້ ປ່ຽນແທນດຳລັດ ສະບັບເລກທີ 163/ນຍ, ລົງວັນທີ 29 ສິງຫາ 1996 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

**ບຸນຍັງ ວໍລະຈິດ**